**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ເລກທີ 2492-[illegible] /ຫກ
ນະຄອນຫຼວງວຽງຈັນ, ວັນທີ 31 ພຶດສະພາ 2023

# ໜັງສືແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ທີ່ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບການສະໜອງການຈັດຊື້ ຢາ, ອຸປະກອນກິລາ ຊຸດກິລາ ຮັບໃຊ້ການຝຶກແອບ ແລະ ແຂ່ງຂັນ ໃຫ້ຄະນະນຳ, ຄູຝຶກ ແລະ ນັກກິລາຄົນພິການທີມຊາດລາວ ກະກຽມເຂົ້າຮ່ວມແຂ່ງຂັນກິລາເອຊຽນພາຣາເກມ ຄັ້ງທີ 4 ປີ 2023 ທີ່ ຫາງໂຈ ສປ.ຈີນ.
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນແບບເປີດກວ້າງພາຍໃນປະເທດ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ຂອງກະຊວງການເງິນເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິ ທີ່ເໝາະສົມ;
4. ບໍລິສັດ ທີ່ມີຄຸນະວຸດທີ່ເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດເບິ່ງເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ຄົ້ນຄວ້າສັງລວມ, ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະກິລາ ໂທລະສັບ:021 216017, 020 95244931 / 020 54104488 / 02056554898 ຕາມວັນເວລາ ລັດຖະການ;
5. ເອກະສານປະມູນຄົບຊຸດ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດ ໄດ້ທີ່ ພະແນກບໍລິຫານ ແລະ ຄົ້ນຄວ້າສັງລວມ, ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ບ້ານ ອານຸ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, ໂທລະສັບ: 021 216017, 020 95244931 / 020 54104488 / 02056554898 ເລີ່ມແຕ່ວັນທີ 25 ມິຖຸນາ 2023 ຕາມວັນເວລາ ລັດຖະການ, ໃນລາຄາ 500,000 ກີບ. ເງິນຈຳນວນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ. ວິທີຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຫ້ອງ 408 ຫ້ອງປະຊຸມກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ກ່ອນເວລາ 14:00 ໂມງ ຂອງວັນທີ 10 ກໍລະກົດ 2023 , ຊອງປະມູນທີ່ສົ່ງມາທາງເອເລັກໂທຣນິກຈະບໍ່ອະນຸຍາດ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກຳນົດໄວ້ ຈະບໍ່ຮັບເອກະສານປະມູນ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 10 ກໍລະກົດ 2023 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນ ການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຄໍ້າປະກັນ ບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ)ຂອງລາຄາປະມູນມາພ້ອມ.

ຫົວໜ້າຫ້ອງການ

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ນ.ດາລາວອນ ກິດຕິພັນ

สแกนด้วย CamScanner